Souphanouvong University Journal of Multidisciplinary Research and Development
2026, Vol. 12, 04, 119-127 ISSN 2521-0563
https://doi.org/10.69692/SUJMRD1204119

Factors Influencing Decision Making for Sugarcane as a Commercial of the People in Phiengxay Village Cluster, Bounneua District, Phongsaly Province

Phuangphanit HONVILAYCHIT[*1], Bounthavy SIPHANTHONG[2], Soutthavone SIOUDOMPHAN[2]

Department of Business Management, Faculty of Economics and Tourism Souphanouvong University, Lao PDR

[*]Correspondence:
Phuangphanit HONVILAYCHIT,
Industrial and Commerce Department, Phongsaly Province,
Tel: 020 59699955;
E-mail: nithongvilaichit@gmail.com
[1] *Faculty of Economics and Tourism, Souphanouvong University*

Article Info:

Submitted: September 19, 2026
Revised: November 05, 2026
Accepted: November 09, 2026

Abstrct

The objectives of this research were to examine the status of sugarcane cultivation and distribution and to investigate the factors associated with the decision to cultivate sugarcane as a commercial crop among residents in the Phiangxai village cluster, Bounneua District, Phongsaly Province. The study population consists of 532 households engaged in commercial sugarcane cultivation across 6 villages, with a sample size of 229 households. Data were collected using a questionnaire. Descriptive statistics including frequencies, percentages, means, and standard deviations were employed for data analysis. Additionally, the Chi-square test was used to examine the relationships between various factors and the decision to cultivate sugarcane, with all analyses performed using the SPSS software.

The study found that farmers have been growing sugarcane as a commercial crop for over five years, with an average cultivation area of 0.73 hectares per household. The District Agriculture Office and a sugarcane promotion project have supported this activity. Key reasons for choosing to grow sugarcane include the availability of a reliable market, favorable selling prices, and low production costs. The average annual yield is 85.70 tonnes per household, generating an average annual income of 88,251,000 kip per household. Factors related to people's decisions to cultivate sugarcane include personal factors, with a correlation statistic of 63.18 (at a 99% confidence level); economic factors, with a correlation statistic of 64.52 (at a 99% confidence level); marketing and support, with a correlation statistic of 168.27 (at a 95% confidence level); social aspects and reference groups, with a correlation statistic of 26.61 (at a 90% confidence level); physical and environmental factors; and production and technology, with a correlation statistic of 88.84 (at a 90% confidence level).

Keywords: influencing factors, decision making, commercial sugarcane cultivation

1. ພາກສະເໜີ

ການສົ່ງເສີມການຜະລິດກະສິກຳເພື່ອການຄ້າ ຫຼື ການສົ່ງອອກນັ້ນ ແມ່ນບູລິມະສິດສຳຄັນຂອງລັດຖະບານເຮົາ ເພື່ອສ້າງລາຍຮັບເຂົ້າປະເທດ ໂດຍສະເພາະພາຍຫຼັງທີ່ລັດຖະບານ ໄດ້ມີການເຊັນສັນຍາການສົ່ງອອກສິນຄ້າກະສິກຳໄປຍັງ ສປ ຈີນ ແລະ ປະເທດອື່ນໆ ເຊິ່ງເປັນການຊຸກຍູ້ການຂະຫຍາຍຕົວການຜະລິດ; ພ້ອມນັ້ນການເປີດນຳໃຊ້ເສັ້ນທາງລົດໄຟລາວ-ຈີນ ໃນທ້າຍປີ 2021 ທີ່ຜ່ານມາ ກໍ່ໄດ້ເປັນນິມິດໝາຍສຳຄັນໃນການສົ່ງເສີມການຂະຫຍາຍຕົວຂອງເສດຖະກິດ ໂດຍ

*Copyright © 2026 by the Authors. Published by Souphanouvong University. This is an open access article under the CC BY-NC-ND license (*http://creativecommons.org/licenses/by-nc-nd/4.0/

ສະເພາະແມ່ນການສົ່ງອອກສິນຄ້າຂອງ ສປປ ລາວ ໄປຍັງ ສປ ຈີນ ແລະ ປະເທດອື່ນໆ (Sayvisith, 2024).

ອ້ອຍເປັນພືດເສດຖະກິດທີ່ສຳຄັນ ເພາະວ່າທຸກສ່ວນຂອງພືດ ສາມາດນຳໃຊ້ໄດ້, ສ້າງມູນຄ່າເພີ່ມໃຫ້ແກ່ອຸດສາຫະກຳທີ່ກ່ຽວຂ້ອງ. ນອກຈາກການຜະລິດນ້ຳຕານແລ້ວ, ຜະລິດຕະພັນຂ້າງຄຽງຍັງສາມາດ ນຳໃຊ້ເປັນວັດຖຸດິບສຳລັບການຜະລິດເອທານອນ ແລະ ເປັນແຫຼ່ງ ພະລັງງານທົດແທນໄດ້. ນອກຈາກນັ້ນ, ເນື້ອອ້ອຍຍັງສາມາດນຳໃຊ້ ເປັນເຊື້ອເພີງເພື່ອຜະລິດໄຟຟ້າ ຫຼື ປຸງແຕ່ງເປັນເນື້ອເຈ້ຍໄດ້ (Laosomboon, 2018). ອຸດສາຫະກຳອ້ອຍ ແລະ ນ້ຳຕານມີຄວາມ ກ່ຽວຂ້ອງຢ່າງໃກ້ຊິດກັບຊາວກະສິກອນປູກອ້ອຍ ແລະ ຜູ້ຄົນຈຳນວນ ຫຼວງຫຼາຍ; ອຸດສາຫະກຳອ້ອຍເປັນແຫຼ່ງນ້ຳຕານທີ່ສຳຄັນ, ຈຳເປັນສຳລັບ ການບໍລິໂພກທົ່ວໂລກ. ນ້ຳຕານທີ່ຜະລິດຈາກອ້ອຍເປັນສິນຄ້າສົ່ງອອກ ທີ່ສຳຄັນທີ່ສ້າງລາຍໄດ້ມະຫາສານໃຫ້ແກ່ຫຼາຍປະເທດທົ່ວໂລກ ເຊັ່ນ: ບຣາຊິນ, ອິນເດຍ, ອີດສະຕຣາລີ, ໄທ, ຫວຽດນາມ, ລາວ ແລະ ອື່ນໆ. ບັນດາປະເທດເຫຼົ່ານີ້ຖືກແຈກຢາຍຢູ່ໃນພາກພື້ນທີ່ແຕກຕ່າງກັນ, ເຊິ່ງ ເຮັດໃຫ້ແຕ່ລະປະເທດສົ່ງອອກມີສ່ວນແບ່ງຕະຫຼາດທີ່ສຳຄັນພາຍໃນ ພາກພື້ນຂອງຕົນ (Naewprasert & Narongchai, 2023).

ສປປ ລາວ ມີສະພາບອາກາດທີ່ເໝາະສົມສຳລັບການປູກອ້ອຍ ເຊິ່ງສ່ວນຫຼາຍແມ່ນນິຍົມປູກຢູ່ໃນເຂດຮາບພຽງ ແລະ ມີພື້ນທີ່ພຽງພໍ ສຳລັບການຜະລິດອຸດສາຫະກຳທາງການກະເສດ ເຊັ່ນ: ແຂວງສະຫວັນ ນະເຂດ, ສາລະວັນ, ເຊກອງ ແລະ ອັດຕະປື. ເພື່ອສະໜອງໃຫ້ ໂຮງງານນ້ຳຕານພາຍໃນປະເທດ. ສ່ວນພື້ນທີ່ໃນການປູກອ້ອຍໃນເຂດ ເມືອງສີງ ແຂວງຫຼວງນ້ຳທາ ແລະ ໃນເມືອງບຸນເໜືອ ແຂວງຜົ້ງສາລີ ເປັນວັດຖຸດິບສົ່ງອອກໄປຍັງ ສປ ຈີນ; ເນື່ອງຈາກເປັນພື້ນທີ່ ທີ່ມີຊາຍ ແດນຕິດກັບ ສປ ຈີນ ແລະ ມີຄວາມສະດວກດ້ານການຂົນສົ່ງ (Ministry of Industry and Commerce, 2025); ສຳລັບ ແຂວງ ຜົ້ງສາລີ ໃນສົກປີ 2024-2025 ສາມາດສຳເລັດການປູກໃໝ່ຢູ່ສວນ ອ້ອຍເກົ່າ ລວມທັງໝົດ 1158.7 ເຮັກຕາ ແລະ ໃນສົກປີ 2025-2026 ຢູ່ແຂວງຜົ້ງສາລີ ມີເນື້ອທີ່ປູກອ້ອຍລວມທັງໝົດ 7053.39 ເຮັກຕາ, ໃນນັ້ນສວນປູກໃໝ່ ມີເນື້ອທີ່ 1158.70 ເຮັກຕາ ແລະ ສວນເກົ່າໃນ ປັດຈຸບັນ 5894.69 ເຮັກຕາ (Planning and Investment Department, 2025); ສຳລັບ ເມືອງບຸນເໜືອ ແມ່ນໄດ້ເລີ່ມໂຄງການ ປູກອ້ອຍແຕ່ ປີ 1996, ຜ່ານການພັດທະນາມາຮອດປັດຈຸບັນທົ່ວເມືອງ ມີ 05 ກຸ່ມບ້ານ, 42 ບ້ານ, ມີປະຊາຊົນ 1,957 ຄອບຄົວປູກອ້ອຍ, ສົກ ປີ 2024-2025 ມີເນື້ອທີ່ປູກອ້ອຍ 4,771 ເຮັກຕາ, ຜົນຜະລິດອ້ອຍ 217,037.315 ໂຕນ, ໃນນັ້ນ: ຜົນຜະລິດອ້ອຍເຂົ້າໂຮງງານ ມີ 207,725.815 ໂຕນ, ແນວພັນອ້ອຍ 9,311.5 ໂຕນ, ສະມັດຕະພາບ ອ້ອຍບັນລຸໄດ້ 45.8 ໂຕນ/ເຮັກຕາ, ລາຍຮັບສະເລ່ຍຕໍ່ຄອບຄົວຂອງ ປະຊາຊົນແມ່ນ 116,490,000 ກີບ, ເນື້ອທີ່ປູກອ້ອຍໃນປັດຈຸບັນ ມີ 4569.57 ເຮັກຕາ, ມີ 39 ບ້ານປູກອ້ອຍ ແລະ ຄອບຄົວປູກອ້ອຍ ມີ 1,673 ຄອບຄົວ (zhongyun muangla import-export raw materials co., ltd., 2025).

ເຊິ່ງໃນຫຼາຍປີທີ່ຜ່ານມາ, ພາຍໃຕ້ການສະໜັບສະໜຸນ ແລະ ການຊ່ວຍເຫຼືອຂອງອົງການປົກຄອງແຂວງ ແລະ ບັນດາເມືອງຕ່າງໆ ໄດ້ຊຸກຍູ້ໃຫ້ປະຊາຊົນປູກໃໝ່ໃນສວນອ້ອຍເກົ່າ, ລົມກົມບ້ານທີ່ເຄີຍ ປູກອ້ອຍກັບຄືນມາປູກອ້ອຍ, ເພີ່ມເນື້ອທີ່ປູກໃໝ່ຕາມແຜນຂອງອຳ ນາດການປົກຄອງ, ໃຫ້ປະຊາຊົນມີແຫຼ່ງລາຍຮັບທີ່ໝັ້ນຄົງ ແລະ ຮັບປະກັນຊີວິດການເປັນຢູ່; ເພີ່ມທະວີໂຄສະນາເຜີຍແຜ່ ແລະ ຝຶກ ອົບຮົມ, ຍົກສູງການແນະນຳເຕັກນິກການປູກ, ການບົວລະບັດ, ການ ຕັດ ແລະ ຂົ້ນຕອນຕ່າງໆໃຫ້ປະຊາຊົນ, ລະດົມໃຫ້ປະຊາຊົນກະກຽມ ດິນປູກ ແລະ ປູກໄວ, ເພື່ອຍົກສູງສະມັດຕະພາບອ້ອຍ; ຈັດຕັ້ງວຽກງານ ການຕັດ ແລະ ຂົນສົ່ງອ້ອຍ, ນຳພາປະຊາຊົນຮຽນຮູ້ ແລະ ດຳເນີນການ ວັດແທກຄ່ານ້ຳຕານກ່ອນຕັດ, ສືບຕໍ່ຊຸກຍູ້ເຕັກນິກການຕັດໄວ້, ຕັດຕ່ຳ ແລະ ສຳເລັດວຽກງານການຕັດອ້ອຍຕາມແຜນຂອງບໍລິສັດ. ເຮັດໃຫ້ ໂຄງການປູກອ້ອຍໄດ້ຮັບການພັດທະນາຢ່າງຕໍ່ເນື່ອງ, ບັນລຸໄດ້ໝາກຜົນ ທາງດ້ານເສດຖະກິດຢ່າງຈະແຈ້ງ, ບັນລຸໄດ້ໃນການເພີ່ມລາຍຮັບໃຫ້ ຊາວກະສິກອນອ້ອຍ, ສ້າງລາຍຮັບດ້ານອາກອນ ແລະ ບໍລິສັດກໍ່ສາມາດ ບັນລຸເປົ້າໝາຍໄດ້ຢ່າງຈີບງາມ. ຜ່ານນະໂຍບາຍການອຸດໜູນ ແລະ ໃຫ້ ລາງວັນ, ເຮັດໃຫ້ການປູກອ້ອຍ ແລະ ການຄຸ້ມຄອງຂອງປະຊາຊົນດີຂຶ້ນ ເທື່ອລະກ້າວ, ໂດຍສະເພາະແມ່ນການປົກແຜ່ນຢາງ, ການຕັດໄວ, ຕັດຕ່ຳ, ການນ້ຳໃຊ້ຢາ ແລະ ຝຸ່ນໄປພ້ອມກັນ ແລະ ການປູກແບບມີ ເຕັກຍົກວິທະຍາສາດນັບມື້ນັບໄດ້ຮັບການຍອມຮັບຈາກປະຊາຊົນ, ລະດັບການຜະລິດຂອງປະຊາຊົນກໍ່ໄດ້ຍົກສູງຂຶ້ນຢ່າງຈະແຈ້ງ ແລະ ໂຄງການປູກອ້ອຍກໍ່ ໄດ້ຮັບຄວາມນິຍົມຈາກປະຊາຊົນຫຼາຍຂຶ້ນ (Industrial and Commerce Office of Bounneua District , 2025).

ຈາກທີ່ມາ ແລະ ຄວາມສຳຄັນທີ່ໄດ້ກ່າວມາຂ້າງເທິງ ຜູ້ສຶກສາ ຈຶ່ງມີຄວາມສົນໃຈໃນການສຶກສາ ປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈ ເລືອກປູກອ້ອຍເພື່ອເປັນສິນຄ້າຂອງປະຊາຊົນກຸ່ມບ້ານພຽງໄຊ, ເມືອງ ບຸນເໜືອ, ແຂວງຜົ້ງສາລີ. ເຊິ່ງຜົນການຄົ້ນຄວ້າສາມາດນຳໃຊ້ເປັນ ແນວທາງໃນການວາງແຜນ, ສົ່ງເສີມ ແລະ ພັດທະນາການຜະລິດອ້ອຍ, ພ້ອມທັງປັບປຸງ ແລະ ພັດທະນາວິທີການສົ່ງເສີມກະສິກຳໃຫ້ເໝາະສົມ ກັບຊາວກະສິກອນຫຼາຍຂຶ້ນ. ສິ່ງນີ້ຈະນຳໄປສູ່ການເພີ່ມທ່າແຮງການ ຜະລິດອ້ອຍຂອງຊາວກະສິກອນ, ການພັດທະນາເສດຖະກິດ, ແລະ ການຫຼຸດຜ່ອນຄວາມທຸກຍາກໃນບັນດາຊາວກະສິກອນປູກອ້ອຍໃນ ອະນາຄົດ. ໂດຍມີຈຸດປະສົງເພື່ອສຶກສາ ສະພາບການປູກ ແລະ ການ ຈັດຈຳໜ່າຍອ້ອຍຂອງປະຊາຊົນກຸ່ມບ້ານພຽງໄຊ ເມືອງບຸນເໜືອ ແຂວງຜົ້ງສາລີ ແລະ ປັດໄຈທີ່ມີຄວາມສຳພັນຕໍ່ການຕັດສິນໃຈເລືອກ

ປູກອ້ອຍເພື່ອເປັນສິນຄ້າຂອງປະຊາຊົນກຸ່ມບ້ານພຽງໄຊ ເມືອງບຸນເໜືອ ແຂວງຜົ້ງສາລີ.

2. ອຸປະກອນ ແລະ ວິທີການ

2.1 ກຸ່ມຕົວຢ່າງ

ໃນການເກັບກຳ ແລະ ລວບລວມຂໍ້ມູນ ຜູ້ສຶກສາໄດ້ມີການລົງເກັບກຳຂໍ້ມູນຕົວຈິງຈາກປະຊາຊົນຜູ້ທີ່ໄດ້ມີການປູກອ້ອຍ ຢູ່ກຸ່ມພຽງໄຊ, ເມືອງບຸນເໜືອ ແຂວງຜົ້ງສາລີ; ປະກອບມີ 532 ຄອບຄົວ ຈາກ 6 ບ້ານ ຄື: ບ້ານຫ້ວຍລໍ 123 ຄອບຄົວ, ບ້ານເຂັມກຳ 43 ຄອບຄົວ, ບ້ານມໍຊໍຊານ 71 ຄອບຄົວ, ບ້ານຫ້ວຍຊາງ 105 ຄອບຄົວ, ບ້ານໃໝ່ລົງທົ່ງ 117 ຄອບຄົວ ແລະ ບ້ານດົງເໜືອ 73 ຄອບຄົວ; ເຊິ່ງສາມາດຄິດໄລ່ກຸ່ມຕົວຢ່າງຈາກສູດຄິດໄລ່ທີ່ຮູ້ກຸ່ມປະຊາກອນທີ່ແນ່ນອນ ຕາມວິທີຂອງ Taro Yamane (1973) ໄດ້ກຸ່ມຕົວຢ່າງ ຈຳນວນ 229 ຄອບຄົວ ແລະ ຈັດແບ່ງຕາມສັດສ່ວນຂອງແຕ່ລະບ້ານ ໄດ້ດັ່ງນີ້: ບ້ານຫ້ວຍລໍ 53 ຄອບຄົວ, ບ້ານເຂັມກຳ 19 ຄອບຄົວ, ບ້ານມໍຊໍຊານ 31 ຄອບຄົວ, ບ້ານຫ້ວຍຊາງ 45 ຄອບຄົວ, ບ້ານໃໝ່ລົງທົ່ງ 50 ຄອບຄົວ ແລະ ບ້ານດົງເໜືອ 31 ຄອບຄົວ.

2.2 ເຄື່ອງມືທີ່ໃຊ້ໃນການວິໄຈ

ການຄົ້ນຄວ້ານີ້ ໄດ້ນຳໃຊ້ວິທີການສຶກສາແບບປະລິມານ ໂດຍນຳໃຊ້ໃຊ້ແບບສອບຖາມທີ່ມີລັກສະນະປາຍປິດ ໂດຍໄດ້ນຳເອົາທິດສະດີການຜະລິດຂອງ Ferguson & Mairice (1978), ທິດສະດີການຕັດສິນໃຈຂອງ Shaner et al. (1993) ແລະ ບົດຄົ້ນຄວ້າທີ່ກ່ຽວຂ້ອງ ຂອງ Laosomboon (2018), Meesungnoen & Taweekul (2019) ແລະ Khansila et al. (2014) ມາກຳນົດຂອບເຂດແນວຄວາມຄິດ ເພື່ອສ້າງເຄື່ອງມື ຫຼື ແບບສອບຖາມທີ່ໃຊ້ໃນການເກັບກຳຂໍ້ມູນ ເຊິ່ງກຳນົດເປັນຄຳຖາມປາຍປິດ ຫຼື ເປັນ Choice ໃຫ້ເລືອກ ໂດຍແບ່ງອອກເປັນ 4 ສ່ວນ ຄື: ຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມ ຫຼື ຫົວໜ້າຄອບຄົວ, ຂໍ້ມູນກ່ຽວກັບການປູກອ້ອຍ, ຂໍ້ມູນກ່ຽວກັບຜົນຜະລິດອ້ອຍ ແລະ ການຈັດຈຳໜ່າຍ ແລະ ຂໍ້ມູນກ່ຽວກັບປັດໄຈທີ່ມີຄວາມສຳພັນຕໍ່ການຕັດສິນໃຈເລືອກປູກອ້ອຍເພື່ອເປັນສິນຄ້າ ແມ່ນໄດ້ກຳນົດເປັນຄ່າ Linking Scale.

2.3 ການເກັບລວມລວມຂໍ້ມູນ

ນຳໃຊ້ແບບສອບຖາມລົງເກັບກຳຂໍ້ມູນຈາກກຸ່ມເປົ້າໝາຍ ເຊິ່ງແມ່ນປະຊາຊົນຜູ້ທີ່ໄດ້ມີການປູກອ້ອຍ ຢູ່ກຸ່ມພຽງໄຊ, ເມືອງບຸນເໜືອ ແຂວງຜົ້ງສາລີ ໃນຊ່ວງເດືອນມິຖຸນາ ຫາ ເດືອນສິງຫາ ປີ 2026 ເປັນເວລາ 3 ເດືອນ ໂດຍຜູ້ສຶກສາໄດ້ອະທິບາຍລາຍລະອຽດກ່ຽວກັບແຕ່ລະຂໍ້ຄຳຖາມໃນແບບສອບຖາມໃຫ້ຜູ້ຕອບແບບສອບຖາມມີຄວາມເຂົ້າໃຈ ແລະ ບັນທຶກຄຳຕອບຂອງຜູ້ໃຫ້ຂໍ້ມູນລົງໃນແບບສອບຖາມດ້ວຍຕົນເອງ; ເຊິ່ງຊ່ວຍໃຫ້ສາມາດເກັບກຳຂໍ້ມູນ ແລະ ແບບສອບຖາມໄດ້ຄົບຕາມຈຳນວນກຸ່ມຕົວຢ່າງທີ່ຕ້ອງການ 100%.

2.4 ການວິເຄາະຂໍ້ມູນ

ສຳລັບການວິເຄາະຂໍ້ມູນກ່ຽວກັບສະພາບລວມໃນການປູກອ້ອຍເປັນສິນຄ້າຂອງປະຊາຊົນພາຍໃນກຸ່ມພຽງໄຊ, ເມືອງບຸນເໜືອ ແຂວງຜົ້ງສາລີ ເຊິ່ງປະກອບດ້ວຍ: ຂໍ້ມູນທົ່ວໄປຂອງຜູ້ປູກອ້ອຍ ແລະ ຂໍ້ມູນກ່ຽວກັບການປູກອ້ອຍ ເຊັ່ນ: ເນື້ອທີ່ໃນການປູກອ້ອຍ, ໄລຍະເວລາໃນການປູກອ້ອຍ, ແນວພັນອ້ອຍທີ່ໃຊ້ປູກ, ວິທີການເກັບກ່ຽວ, ປະລິມານຜົນຜະລິດ, ເຫດຜົນໃນການປູກ, ການຈຳໜ່າຍຜົນຜະລິດ, ຄ່າໃຊ້ຈ່າຍໃນການປູກ ແລະ ອື່ນໆ. ແມ່ນໄດ້ນຳໃຊ້ສະຖິຕິພື້ນຖານເພື່ອຊອກຫາຄ່າເປີເຊັນ (%) ແລະ ຄ່າສະເລ່ຍ ເຊິ່ງຈະສະແດງຂໍ້ມູນເປັນຕາຕະລາງເພື່ອອະທິບາຍຜົນ. ສ່ວນການວິເຄາະຂໍ້ມູນປັດໄຈທີ່ມີຄວາມສຳພັນຕໍ່ການຕັດສິນໃຈເລືອກປູກອ້ອຍເປັນສິນຄ້າຂອງປະຊາຊົນ ແມ່ນນຳໃຊ້ການວິເຄາະຄວາມສຳພັນແບບ Chi-Square ດ້ວຍວິທີ Pearson Chi-Square ເປັນເຄື່ອງມືໃນການວິເຄາະ ແລະ ອະທິບາຍປັດໄຈທີ່ມີຄວາມສຳພັນຕໍ່ການຕັດສິນໃຈເລືອກປູກອ້ອຍເປັນສິນຄ້າຂອງປະຊາຊົນກຸ່ມພຽງໄຊ, ເມືອງບຸນເໜືອ ແຂວງຜົ້ງສາລີ ດ້ວຍຄ່າລະດັບຄວາມເຊື່ອໝັ້ນທີ່ລະດັບ 90%, 95% ແລະ 99% ຕາມລຳດັບ.

3. ຜົນໄດ້ຮັບ

ຜົນການສຶກສາພົບວ່າ: ຫົວໜ້າຄົວເຮືອນໂດຍສ່ວນໃຫຍ່ເປັນເພດຊາຍ ມີຈຳນວນ 212 ຄົນ ກວມເອົາ 92.58% ແລະ ເພດຍິງ ມີ 17 ຄົນ ກວມເອົາ 7.42%. ສ່ວນຫຼາຍມີອາຍຸຢູ່ລະຫວ່າງ 40 – 49 ປີ ມີຈຳນວນ 98 ຄົນ ກວມເອົາ 42.80%, ຮອງລົງມາແມ່ນມີອາຍຸຢູ່ລະຫວ່າງ 30 – 39 ປີ ມີຈຳນວນ 65 ຄົນ ກວມເອົາ 28.38%, ລະດັບການສຶກສາ ຈົບມັດທະຍົມ ມີຈຳນວນ 129 ຄົນ ກວມເອົາ 56.33%, ຮອງລົງມາແມ່ນຈົບປະຖົມ ມີຈຳນວນ 94 ຄົນ ກວມເອົາ 41.05%, ສ່ວນຈົບຊັ້ນສູງ ມີພຽງ 6 ຄົນ ກວມເອົາ 2.62% ເທົ່ານັ້ນ. ຈຳນວນສະມາຊິກໃນຄອບຄົວ ສ່ວນຫຼາຍແມ່ນ 4-5 ຄົນ ມີຈຳນວນ 103 ຄອບຄົວ ກວມເອົາ 44.98%, ຮອງລົງມາແມ່ນ 6-7 ຄົນ ມີຈຳນວນ 93 ຄອບຄົວ ກວມເອົາ 40.61% ແລະ 2-3 ຄົນ ມີຈຳນວນ 33 ຄອບຄົວ ກວມເອົາ 14.41%. ຈຳນວນສະມາຊິກໃນຄອບຄົວທີ່ສາມາດປະກອບອາຊີບ ແມ່ນ 2-3 ຄົນ ມີຈຳນວນ 113 ຄອບຄົວ ກວມເອົາ 49.35%, ຮອງລົງມາແມ່ນ 4-5 ຄົນ ມີຈຳນວນ 110 ຄອບຄົວ ກວມເອົາ 48.03%, ສ່ວນຈຳນວນແຮງງານພາຍໃນຄອບຄົວທີ່ໃຊ້ເຂົ້າໃນການປູກອ້ອຍ 6-7 ຄົນ ມີພຽງ 6 ຄອບຄົວ ກວມເອົາ 2.62%, ລາຍໄດ້ທີ່ບໍ່ແມ່ນຈາກການປູກອ້ອຍ ໂດຍສ່ວນໃຫຍ່ແມ່ນໜ້ອຍກວ່າ 1,000,000 ກີບ ມີຈຳນວນ 86 ຄອບຄົວ ກວມເອົາ 37.55%, ຮອງລົງມາແມ່ນຢູ່ລະຫວ່າງ 1,000,000 – 2,000,000 ກີບ ມີຈຳນວນ 57 ຄອບຄົວ ກວມເອົາ 24.89%, ຖັດມາແມ່ນ 2,000,001 – 3,000,000 ກີບ ມີຈຳນວນ 46 ຄອບຄົວ ກວມເອົາ 20.09% ແລະ ຫຼາຍກວ່າ 3,000,000 ກີບ ມີຈຳນວນ 40 ຄອບຄົວ ກວມເອົາ 17.47%.

ໄລຍະເວລາໃນການປູກອ້ອຍຂອງປະຊາຊົນ ໂດຍສ່ວນຫຼາຍ ແມ່ນ 5 - 6 ປີ ມີຈຳນວນ 98 ຄອບຄົວ ກວມເອົາ 42.80%, ຮອງລົງ ມາແມ່ນ 3 - 4 ປີ ມີຈຳນວນ 87 ຄອບຄົວ ກວມເອົາ 37.99%, 1 - 2 ປີ ມີຈຳນວນ 33 ຄອບຄົວ ກວມເອົາ 14.41%, ສ່ວນໄລຍະເວລາ ໃນການປູກອ້ອຍຂອງປະຊາຊົນ 7 ປີ ຂຶ້ນໄປ ມີພຽງ 11 ຄອບຄົວ ກວມເອົາ 4.80% ຕາມລຳດັບ. ການຮັບຮູ້ຂໍ້ມູນກ່ຽວກັບປູກອ້ອຍ ໂດຍຫຼັກໆມາຈາກຫ້ອງການກະສິກຳເມືອງ ມີຈຳນວນ 177 ຄອບຄົວ ຄິດເປັນ 58.22% ແລະ ກວມເອົາ 14.85% ຂອງຈຳນວນກຸ່ມຕົວຢ່າງ; ຮອງລົງມາແມ່ນມາຈາກໂຄງການສົ່ງເສີມການປູກອ້ອຍ ມີຈຳນວນ 70 ຄອບຄົວ ຄິດເປັນ 23.03% ແລະ ກວມເອົາ 30.57% ຂອງຈຳນວນ ກຸ່ມຕົວຢ່າງ; ຖັດມາແມ່ນມາຈາກເພື່ອນບ້ານ ມີຈຳນວນ 34 ຄອບຄົວ ຄິດເປັນ 11.18% ແລະ ກວມເອົາ 14.85% ຂອງຈຳນວນກຸ່ມຕົວຢ່າງ ແລະ ມາຈາກກຸ່ມປະຊາຊົນຜູ້ປູກອ້ອຍ ມີຈຳນວນ 23 ຄອບຄົວ ຄິດ ເປັນ 7.57% ແລະ ກວມເອົາ 10.04% ຂອງຈຳນວນກຸ່ມຕົວຢ່າງ. ເນື້ອທີ່ດິນໃນການຜະລິດກະສິກຳ ໂດຍສະເລ່ຍ 1.61 ເຮັກຕາ/ຄອບຄົວ ເຊິ່ງໂດຍສ່ວນໃຫຍ່ມີເນື້ອທີ່ດິນໃນການຜະລິດກະສິກຳ 1.00 – 2.00 ເຮັກຕ່າ ມີຈຳນວນ 87 ຄອບຄົວ ກວມເອົາ 37.99%, ຮອງລົງມາແມ່ນ ມີເນື້ອທີ່ດິນໃນການຜະລິດກະສິກຳ 2.01 – 3.00 ເຮັກຕ່າ ມີຈຳນວນ 75 ຄອບຄົວ ກວມເອົາ 32.75% ແລະ ໜ້ອຍກວ່າ 1.00 ເຮັກຕ່າ ມີຈຳນວນ 61 ຄອບຄົວ ກວມເອົາ 26.64%, ສ່ວນປະຊາຊົນທີ່ມີ ເນື້ອທີ່ດິນໃນການຜະລິດກະສິກຳຫຼາຍກວ່າ 3.00 ເຮັກຕ່າ ມີພຽງ 6 ຄອບຄົວ ກວມເອົາ 2.62% ເທົ່ານັ້ນ. ປະຊາຊົນໄດ້ປູກອ້ອຍໃນພື້ນທີ່ ດິນຂອງຕົນເອງທັງໝົດ 100% ໂດຍບໍ່ໄດ້ມີການເຊົ່າທີ່ດິນ; ເຊິ່ງເນື້ອທີ່ ດິນໃນການສະເພາະການປູກອ້ອຍ ໂດຍສະເລ່ຍ 0.73 ເຮັກຕາ/ ຄອບຄົວ ເຊິ່ງໂດຍສ່ວນໃຫຍ່ມີເນື້ອທີ່ດິນໃນການປູກອ້ອຍ ໜ້ອຍກວ່າ 1.00 ເຮັກຕ່າ ມີຈຳນວນ 136 ຄອບຄົວ ກວມເອົາ 59.39%, ຮອງລົງ ແມ່ນມີເນື້ອທີ່ດິນໃນການປູກອ້ອຍ 1.00 – 2.00 ເຮັກຕ່າ ມີຈຳນວນ 87 ຄອບຄົວ ກວມເອົາ 37.99%, ສ່ວນປະຊາຊົນທີ່ມີເນື້ອທີ່ດິນໃນ ການປູກອ້ອຍ 2.01 – 3.00 ເຮັກຕ່າ ມີພຽງ 6 ຄອບຄົວ ກວມເອົາ 2.62% ເທົ່ານັ້ນ. ແນວພັນອ້ອຍທີ່ໃຊ້ປູກສ່ວນຫຼາຍແມ່ນແນວພັນ ອ້ອຍໂຮງງານ ມີຈຳນວນ 196 ຄອບຄົວ ກວມເອົາ 85.59%, ສ່ວນ ອີກ 33 ຄອບຄົວ ກວມເອົາ 14.41% ແມ່ນໄດ້ປູກທັງອ້ອຍໂຮງງານ ແລະ ອ້ອຍພື້ນບ້ານໄປຄຽງຄູ່ກັນ. ເຊິ່ງແນວພັນອ້ອຍໄດ້ມາຈາກ ໂຄງການ ຫຼື ບໍລິສັດສະໜອງໃຫ້ ມີຈຳນວນ 229 ຄິດເປັນ 72.93% ແລະ ກວມເອົາ 100% ຂອງຈຳນວນຕົວຢ່າງ, ຮອງລົງມາແມ່ນ ຄອບຄົວມີມາເອງແຕ່ດັ້ງເດີມ ຈຳນວນ 45 ຄອບຄົວ ຄິດເປັນ 14.33% ແລະ ກວມເອົາ 19.65% ຂອງຈຳນວນຕົວຢ່າງ, ພີ່ນ້ອງ ຫຼື ຄົນຮູ້ຈັກ ເອົາໃຫ້ ຈຳນວນ 28 ຄອບຄົວ ຄິດເປັນ 8.92% ແລະ ກວມເອົາ 12.23% ຂອງຈຳນວນຕົວຢ່າງ ແລະ ຊື້ໃໝ່ ຈຳນວນ 12 ຄອບຄົວ ຄິດ ເປັນ 3.82% ແລະ ກວມເອົາ 5.24% ຂອງຈຳນວນຕົວຢ່າງ. ເຫດຜົນ ທີ່ເລືອກປູກອ້ອຍຫຼັກໆແມ່ນເນື່ອງຈາກການປູກອ້ອຍ ມີຕະຫຼາດຮອງ ຮັບພຽງພໍ ມີຈຳນວນ 213 ຄອບຄົວ ຄິດເປັນ 39.74% ແລະ ກວມ ເອົາ 93.01% ຂອງຈຳນວນຕົວຢ່າງ, ຮອງລົງມາແມ່ນໄດ້ລາຄາດີ ມີຈຳ ນວນ 160 ຄອບຄົວ ຄິດເປັນ 29.85% ແລະ ກວມເອົາ 69.87% ຂອງຈຳນວນຕົວຢ່າງ, ຖັດມາແມ່ນໃຊ້ຕົ້ນທຶນໃນການປູກຕ່ຳ ມີຈຳ ນວນ 67 ຄອບຄົວ ຄິດເປັນ 12.50% ແລະ ກວມເອົາ 29.26% ຂອງຈຳນວນຕົວຢ່າງ. ໂດຍແຫຼ່ງເງິນທຶນທີ່ໃຊ້ປູກອ້ອຍຫຼັກໆແມ່ນທຶນ ສະໜັບສະໜຸນຈາກບໍລິສັດ ຈຳນວນ 229 ຄອບຄົວ ຄິດເປັນ 69.60% ແລະ ກວມເອົາ 100.00% ຂອງຈຳນວນຕົວຢ່າງ, ຮອງລົງມາແມ່ນໃຊ້ ທຶນຕົນເອງ ຈຳນວນ 76 ຄອບຄົວ ຄິດເປັນ 23.10% ແລະ ກວມເອົາ 33.19% ຂອງຈຳນວນຕົວຢ່າງ ແລະ ທຶນກູ້ຢືມ ຈຳນວນ 24 ຄອບຄົວ ຄິດເປັນ 7.30% ແລະ ກວມເອົາ 10.48% ຂອງຈຳນວນຕົວຢ່າງ. ຕົ້ນ ທຶນທີ່ໃຊ້ປູກອ້ອຍ (ບໍ່ລວມຄ່າແຮງງານ) ໂດຍສະເລ່ຍ 4,506,550 ກີບ/ຄອບຄົວ, ເຊິ່ງໂດຍສ່ວນຫຼາຍແມ່ນໃຊ້ຕົ້ນທຶນໃນການປູກອ້ອຍ ຫຼາຍກວ່າ 5,000,000 ກີບ ຈຳນວນ 93 ຄອບຄົວ ກວມເອົາ 40.61%, ຮອງລົງມາແມ່ນໃຊ້ຕົ້ນທຶນໃນການປູກອ້ອຍຢູ່ລະຫວ່າງ 2,000,000 – 3,000,000 ກີບ ຈຳນວນ 62 ຄອບຄົວ ກວມເອົາ 27.07%, ຖັດມາແມ່ນໃຊ້ຕົ້ນທຶນໃນການປູກອ້ອຍຢູ່ລະຫວ່າງ 4,000,001 – 5,000,000 ກີບ ຈຳນວນ 58 ຄອບຄົວ ກວມເອົາ 15.28%.

ແຮງງານທີ່ໃຊ້ເຂົ້າໃນການປູກອ້ອຍທັງໝົດ ສ່ວນໃຫຍ່ຈະຢູ່ ລະຫວ່າງ 6 – 10 ຄົນ ມີຈຳນວນ 141 ຄອບຄົວ ກວມເອົາ 61.57%, ຮອງລົງມາແມ່ນໃຊ້ແຮງງານໃນການປູກ 11 – 15 ຄົນ ຈຳນວນ 64 ຄອບຄົວ ກວມເອົາ 27.95% ແລະ ໃຊ້ແຮງງານໃນການປູກ 1 – 5 ຄົນ ຈຳນວນ 24 ຄອບຄົວ ກວມເອົາ 10.48%; ເຊິ່ງໂດຍສະເລ່ຍແລ້ວ ປະມານ 8-9 ຄົນ/ຄອບຄົວ. ໂດຍແຮງງານທີ່ໃຊ້ເຂົ້າໃນການປູກອ້ອຍ ສ່ວນຫຼາຍແມ່ນນຳໃຊ້ທັງແຮງງານພາຍໃນຄອບຄົວ ແລະ ຈ້າງແຮງງານ ເພີ່ມ ມີຈຳນວນ 211 ຄອບຄົວ ກວມເອົາ 92.14% ເຊິ່ງໃນນັ້ນແຮງ ງານທີ່ຈ້າງເພີ່ມສ່ວນໃຫຍ່ແມ່ນຈ້າງເພີ່ມຢູ່ລະຫວ່າງ 1 – 5 ຄົນ ແລະ ຄ່າຈ້າງແຮງງານຢູ່ທີ່ 180,001 – 200,000 ກີບ/ຄົນ , ສ່ວນຄອບຄົວ ທີ່ນຳໃຊ້ແຮງງານພາຍໃນຄອບຄົວສະເພາະ ມີພຽງ 18 ຄອບຄົວ ກວມ ເອົາ 7.86%. ສຳລັບການເກັບກູ້ຜົນຜະລິດອ້ອຍ ແມ່ນຈະເກັບກູ້ພຽງຄັ້ງ ດຽວປີ ແລະ ປະລິມານຜົນຜະລິດອ້ອຍ/ປີ ໂດຍສ່ວນໃຫຍ່ແມ່ນຢູ່ ລະຫວ່າງ 50.01 – 10.00 ໂຕ່ນ ມີຈຳນວນ 87 ຄອບຄົວ ກວມເອົາ 37.99%, ຮອງລົງມາແມ່ນໜ້ອຍກວ່າ 50.00 ໂຕ່ນ ມີຈຳນວນ 61 ຄອບຄົວ ກວມເອົາ 26.64% ແລະ 100.01 – 150.00 ໂຕ່ນ ມີຈຳ ນວນ 58 ຄອບຄົວ ກວມເອົາ 25.33%, ເຊິ່ງໂດຍສະເລ່ຍແລ້ວ ຄອບຄົວໜຶ່ງສາມາດເກັບກູ້ຜົນຜະລິດອ້ອຍໄດ້ 85.70 ໂຕ່ນ. ເຊິ່ງຜົນ

ຜະລິດອ້ອຍທີ່ເກັບກູ້ໄດ້ແມ່ນຂາຍອອກທັງໝົດ ບໍ່ໄດ້ມີການບໍລິໂພກ ຫຼື ໃຊ້ໃນຄອບຄົວເລີຍ, ເຊິ່ງວິທີການຂາຍ ຫຼື ຈຳໜ່າຍ 100% ແມ່ນຂາຍໃຫ້ກັບໂຮງງານ ແລະ ລາຄາຂາຍອ້ອຍຢູ່ທີ່ 1,030,000 ກີບ/ໂຕ່ນ.

ເຊິ່ງຜົນຜະລິດອ້ອຍທີ່ເກັບກູ້ໄດ້ແມ່ນຂາຍອອກທັງໝົດ ບໍ່ໄດ້ມີການບໍລິໂພກ ຫຼື ໃຊ້ໃນຄອບຄົວເລີຍ, ເຊິ່ງວິທີການຂາຍ ຫຼື ຈຳໜ່າຍ 100% ແມ່ນຂາຍໃຫ້ກັບໂຮງງານ ແລະ ລາຄາຂາຍອ້ອຍຢູ່ທີ່ 1,030,000 ກີບ/ໂຕ່ນ.

ຜົນການທົດສອບຄວາມສຳພັນຂອງປັດໄຈສ່ວນບຸກຄົນ ທີ່ມີຄວາມສຳພັນຕໍ່ການຕັດສິນໃຈເລືອກປູກອ້ອຍຂອງປະຊາຊົນ ພົບວ່າ: ເພດຂອງຫົວໜ້າຄອບຄົວ ມີຄວາມສຳພັນກັບການຕັດສິນໃຈປູກອ້ອຍ ດ້ວຍຄ່າສະຖິຕິຄວາມສຳພັນ ເທົ່າກັບ 29.97 ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.01 ນັ້ນໝາຍຄວາມວ່າ ເພດຂອງຫົວໜ້າຄອບຄົວທີ່ ມີຄວາມສຳພັນກັບການຕັດສິນໃຈປູກອ້ອຍທີ່ແຕກຕ່າງກັນ ດ້ວຍລະດັບຄວາມເຊື່ອໝັ້ນ 99%; ອາຍຸຂອງຫົວໜ້າຄອບຄົວ ມີຄວາມສຳພັນກັບການຕັດສິນໃຈປູກອ້ອຍ ດ້ວຍຄ່າສະຖິຕິຄວາມສຳພັນ ເທົ່າກັບ 63.51 ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.01 ນັ້ນໝາຍຄວາມວ່າ ອາຍຸຂອງຫົວໜ້າຄອບຄົວ ມີຄວາມສຳພັນກັບການຕັດສິນໃຈປູກອ້ອຍທີ່ແຕກຕ່າງກັນ ດ້ວຍລະດັບຄວາມເຊື່ອໝັ້ນ 99%, ລະດັບການສຶກສາຂອງຫົວໜ້າຄອບຄົວ ມີຄວາມສຳພັນກັບການຕັດສິນໃຈປູກອ້ອຍ ດ້ວຍຄ່າສະຖິຕິຄວາມສຳພັນ ເທົ່າກັບ 62.07 ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.01 ນັ້ນໝາຍຄວາມວ່າ ລະດັບການສຶກສາຂອງຫົວໜ້າຄອບຄົວ ມີຄວາມສຳພັນກັບການຕັດສິນໃຈປູກອ້ອຍທີ່ແຕກຕ່າງກັນ ດ້ວຍລະດັບຄວາມເຊື່ອໝັ້ນ 99%; ຈຳນວນສະມາຊິກໃນຄອບຄົວ ແລະ ຈຳນວນແຮງງານໃນຄອບຄົວຄົວ ຄວາມສຳພັນກັບການຕັດສິນໃຈປູກອ້ອຍ ດ້ວຍຄ່າສະຖິຕິຄວາມສຳພັນ ເທົ່າກັບ 25.55 ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.01 ນັ້ນໝາຍຄວາມວ່າ ຈຳນວນສະມາຊິກໃນຄອບຄົວ ແລະ ຈຳນວນແຮງງານໃນຄອບຄົວຄົວ ມີຄວາມສຳພັນກັບການຕັດສິນໃຈປູກອ້ອຍທີ່ແຕກຕ່າງກັນ ດ້ວຍລະດັບຄວາມເຊື່ອໝັ້ນ 99%; ສ່ວນລາຍໄດ້ອື່ນນອກຈາກການປູກອ້ອຍ ແມ່ນບໍ່ມີຄວາມສຳພັນຕໍ່ການຕັດສິນໃຈເລືອກປູກອ້ອຍ.

ຜົນການທົດສອບຄວາມສຳພັນຂອງປັດໄຈດ້ານເສດຖະກິດ ທີ່ມີຕໍ່ການຕັດສິນໃຈເລືອກປູກອ້ອຍຂອງປະຊາຊົນ ພົບວ່າ: ລາຄາຮັບຊື້ຜົນຜະລິດອ້ອຍ ມີຄວາມສຳພັນກັບການຕັດສິນໃຈປູກອ້ອຍ ດ້ວຍຄ່າສະຖິຕິຄວາມສຳພັນ ເທົ່າກັບ 11.90 ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.01 ນັ້ນໝາຍຄວາມວ່າ ລາຄາຮັບຊື້ຜົນຜະລິດອ້ອຍ ມີຄວາມສຳພັນກັບການຕັດສິນໃຈປູກອ້ອຍທີ່ແຕກຕ່າງກັນ ດ້ວຍລະດັບຄວາມເຊື່ອໝັ້ນ 99%; ນະໂຍບາຍການຄ້ຳປະກັນລາຄາ ມີຄວາມສຳພັນກັບການຕັດສິນໃຈປູກອ້ອຍ ດ້ວຍຄ່າສະຖິຕິຄວາມສຳພັນ ເທົ່າກັບ 34.31 ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.01 ນັ້ນໝາຍຄວາມວ່າ ນະໂຍບາຍການຄ້ຳປະກັນລາຄາ ມີຄວາມສຳພັນກັບການຕັດສິນໃຈປູກອ້ອຍທີ່ແຕກຕ່າງກັນ ດ້ວຍລະດັບຄວາມເຊື່ອໝັ້ນ 99%; ແລະ ຄ່າແຮງງານໃນການປູກ ແລະ ເກັບກ່ຽວຜົນຜະລິດ ມີຄວາມສຳພັນກັບການຕັດສິນໃຈປູກອ້ອຍ ດ້ວຍຄ່າສະຖິຕິຄວາມສຳພັນ ເທົ່າກັບ 20.82 ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.01 ນັ້ນໝາຍຄວາມວ່າ ຄ່າແຮງງານໃນການປູກ ແລະ ເກັບກ່ຽວຜົນຜະລິດ ມີຄວາມສຳພັນກັບການຕັດສິນໃຈປູກອ້ອຍທີ່ແຕກຕ່າງກັນ ດ້ວຍລະດັບຄວາມເຊື່ອໝັ້ນ 99%; ສຳລັບລາຍໄດ້ຈາກການຂາຍຜົນຜະລິດອ້ອຍ ມີຄວາມສຳພັນກັບການຕັດສິນໃຈປູກອ້ອຍ ດ້ວຍຄ່າສະຖິຕິຄວາມສຳພັນ ເທົ່າກັບ 7.04 ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.05 ນັ້ນໝາຍຄວາມວ່າ ລາຍໄດ້ຈາກການຂາຍຜົນຜະລິດອ້ອຍ ມີຄວາມສຳພັນກັບການຕັດສິນໃຈປູກອ້ອຍທີ່ແຕກຕ່າງກັນ ດ້ວຍລະດັບຄວາມເຊື່ອໝັ້ນ 95% ແລະ ຕົ້ນທຶນການປູກອ້ອຍ ມີຄວາມສຳພັນກັບການຕັດສິນໃຈປູກອ້ອຍ ດ້ວຍຄ່າສະຖິຕິຄວາມສຳພັນ ເທົ່າກັບ 4.03 ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.05 ນັ້ນໝາຍຄວາມວ່າ ຕົ້ນທຶນການປູກອ້ອຍ ມີຄວາມສຳພັນກັບການຕັດສິນໃຈປູກອ້ອຍທີ່ແຕກຕ່າງກັນ ດ້ວຍລະດັບຄວາມເຊື່ອໝັ້ນ 95%; ສ່ວນການເຂົ້າເຖິງສິນເຊື່ອທະນາຄານ ຫຼື ສະຖາບັນການເງິນ ແມ່ນບໍ່ມີຄວາມສຳພັນ ຫຼື ສົ່ງຜົນຕໍ່ການຕັດສິນໃຈເລືອກປູກອ້ອຍ.

ຜົນການທົດສອບຄວາມສຳພັນຂອງປັດໄຈດ້ານການຕະຫຼາດ ແລະ ການສະໜັບສະໜຸນ ທີ່ມີຕໍ່ການຕັດສິນໃຈເລືອກປູກອ້ອຍຂອງປະຊາຊົນ ພົບວ່າ: ຄວາມສະດວກໃນການຂົນສົ່ງ ມີຄວາມສຳພັນກັບການຕັດສິນໃຈປູກອ້ອຍ ດ້ວຍຄ່າສະຖິຕິຄວາມສຳພັນ ເທົ່າກັບ 10.63 ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.01 ນັ້ນໝາຍຄວາມວ່າ ຄວາມສະດວກໃນການຂົນສົ່ງ ມີຄວາມສຳພັນກັບການຕັດສິນໃຈປູກອ້ອຍທີ່ແຕກຕ່າງກັນ ດ້ວຍລະດັບຄວາມເຊື່ອໝັ້ນ 99%; ການສະໜັບສະໜຸນດ້ານເງິນທຶນຈາກບໍລິສັດ ຫຼື ໂຮງງານ ມີຄວາມສຳພັນກັບການຕັດສິນໃຈປູກອ້ອຍ ດ້ວຍຄ່າສະຖິຕິຄວາມສຳພັນ ເທົ່າກັບ 32.94 ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.01 ນັ້ນໝາຍຄວາມວ່າ ການສະໜັບສະໜຸນດ້ານເງິນທຶນຈາກບໍລິສັດ ຫຼື ໂຮງງານ ມີຄວາມສຳພັນກັບການຕັດສິນໃຈປູກອ້ອຍທີ່ແຕກຕ່າງກັນ ດ້ວຍລະດັບຄວາມເຊື່ອໝັ້ນ 99% ແລະ ການສົ່ງເສີມຈາກໜ່ວຍງານພາກລັດ ມີຄວາມສຳພັນກັບການຕັດສິນໃຈປູກອ້ອຍ ດ້ວຍຄ່າສະຖິຕິຄວາມສຳພັນ ເທົ່າກັບ 7.83 ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.01 ນັ້ນໝາຍຄວາມວ່າ ການສະໜັບສະໜຸນດ້ານເງິນທຶນຈາກບໍລິສັດ ຫຼື ໂຮງງານ ມີຄວາມສຳພັນກັບການຕັດສິນໃຈປູກອ້ອຍທີ່ແຕກຕ່າງກັນ ດ້ວຍລະດັບຄວາມເຊື່ອໝັ້ນ 99%.

ຜົນການທົດສອບຄວາມສຳພັນຂອງປັດໄຈດ້ານສັງຄົມ ແລະ ກຸ່ມອ້າງອີງ ທີ່ມີຕໍ່ການຕັດສິນໃຈເລືອກປູກອ້ອຍຂອງປະຊາຊົນ ພົບວ່າ: ການສະໜັບສະໜຸນຂອງຄົນໃນຄອບຄົວ ມີຄວາມສຳພັນກັບການຕັດສິນໃຈປູກອ້ອຍ ດ້ວຍຄ່າສະຖິຕິຄວາມສຳພັນ ເທົ່າກັບ 28.79 ດ້ວຍ

ລະດັບຄວາມສຳຄັນທາງສະຖິຕິ 0.01 ນັ້ນໝາຍຄວາມວ່າ ການສະໜັບສະໜຸນຂອງຄົນໃນຄອບຄົວ ມີຄວາມສຳພັນກັບການຕັດສິນໃຈປຸກອ້ອຍທີ່ແຕກຕ່າງກັນ ດ້ວຍລະດັບຄວາມເຊື່ອໝັ້ນ 99%, ການແນະນຳຈາກເພື່ອນບ້ານ ມີຄວາມສຳພັນກັບການຕັດສິນໃຈປຸກອ້ອຍ ດ້ວຍຄ່າສະຖິຕິຄວາມສຳພັນ ເທົ່າກັບ 39.72ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.01 ນັ້ນໝາຍຄວາມວ່າ ການແນະນຳຈາກເພື່ອນບ້ານ ມີຄວາມສຳພັນກັບການຕັດສິນໃຈປຸກອ້ອຍທີ່ແຕກຕ່າງກັນ ດ້ວຍລະດັບຄວາມເຊື່ອໝັ້ນ 99%, ການແນະນຳຈາກຜູ້ທີ່ປຸກອ້ອຍ ມີຄວາມສຳພັນກັບການຕັດສິນໃຈປຸກອ້ອຍ ດ້ວຍຄ່າສະຖິຕິຄວາມສຳພັນ ເທົ່າກັບ 26.55 ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.01 ນັ້ນໝາຍຄວາມວ່າ ການແນະນຳຈາກຜູ້ທີ່ປຸກອ້ອຍ ມີຄວາມສຳພັນກັບການຕັດສິນໃຈປຸກອ້ອຍທີ່ແຕກຕ່າງກັນ ດ້ວຍລະດັບຄວາມເຊື່ອໝັ້ນ 99%, ການມີຄວາມຮູ້ວິຊາສະເພາະ ແລະ ປະສົບການໃນການປຸກອ້ອຍ ມີຄວາມສຳພັນກັບການຕັດສິນໃຈປຸກອ້ອຍ ດ້ວຍຄ່າສະຖິຕິຄວາມສຳພັນ ເທົ່າກັບ 49.06 ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.01 ນັ້ນໝາຍຄວາມວ່າ ການມີຄວາມຮູ້ວິຊາສະເພາະ ແລະ ປະສົບການໃນການປຸກອ້ອຍ ມີຄວາມສຳພັນກັບການຕັດສິນໃຈປຸກອ້ອຍທີ່ແຕກຕ່າງກັນ ດ້ວຍລະດັບຄວາມເຊື່ອໝັ້ນ 99%,

ຜົນການທົດສອບຄວາມສຳພັນຂອງປັດໄຈດ້ານກາຍຍະພາບ ແລະ ສິ່ງແວດລ້ອມ ທີ່ມີຕໍ່ການຕັດສິນໃຈເລືອກປຸກອ້ອຍຂອງປະຊາຊົນ ພົບວ່າ: ພື້ນທີ່ ແລະ ດິນມີຄວາມເໝາະສົມ ມີຄວາມສຳພັນກັບການຕັດສິນໃຈປຸກອ້ອຍ ດ້ວຍຄ່າສະຖິຕິຄວາມສຳພັນ ເທົ່າກັບ 18.69 ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.01 ນັ້ນໝາຍຄວາມວ່າ ພື້ນທີ່ ແລະ ດິນມີຄວາມເໝາະສົມ ມີຄວາມສຳພັນກັບການຕັດສິນໃຈປຸກອ້ອຍທີ່ແຕກຕ່າງກັນ ດ້ວຍລະດັບຄວາມເຊື່ອໝັ້ນ 99%, ການມີລະບົບຊົນລະປະທານທີ່ໝັ້ນຄົງ ມີຄວາມສຳພັນກັບການຕັດສິນໃຈປຸກອ້ອຍ ດ້ວຍຄ່າສະຖິຕິຄວາມສຳພັນ ເທົ່າກັບ 28.37 ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.01 ນັ້ນໝາຍຄວາມວ່າ ການມີລະບົບຊົນລະປະທານທີ່ໝັ້ນຄົງ ມີຄວາມສຳພັນກັບການຕັດສິນໃຈປຸກອ້ອຍທີ່ແຕກຕ່າງກັນ ດ້ວຍລະດັບຄວາມເຊື່ອໝັ້ນ 99%, ການມີພູມອາກາດ ຫຼື ອຸນຫະພູມເໝາະສົມ ມີຄວາມສຳພັນກັບການຕັດສິນໃຈປຸກອ້ອຍ ດ້ວຍຄ່າສະຖິຕິຄວາມສຳພັນ ເທົ່າກັບ 45.52 ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.01 ນັ້ນໝາຍຄວາມວ່າ ການມີພູມອາກາດ ຫຼື ອຸນຫະພູມເໝາະສົມ ມີຄວາມສຳພັນກັບການຕັດສິນໃຈປຸກອ້ອຍທີ່ແຕກຕ່າງກັນ ດ້ວຍລະດັບຄວາມເຊື່ອໝັ້ນ 99%, ສຳລັບ ການມີປະລິມານນ້ຳຝົນສະໝ່ຳສະເໝີ ມີຄວາມສຳພັນກັບການຕັດສິນໃຈປຸກອ້ອຍ ດ້ວຍຄ່າສະຖິຕິຄວາມສຳພັນ ເທົ່າກັບ 4.69 ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.1 ນັ້ນໝາຍຄວາມວ່າ ການມີປະລິມານນ້ຳຝົນສະໝ່ຳສະເໝີ ມີຄວາມສຳພັນກັບການຕັດສິນໃຈປຸກອ້ອຍທີ່ແຕກຕ່າງກັນ ດ້ວຍລະດັບຄວາມເຊື່ອໝັ້ນ 90%.

ສ່ວນຜົນການທົດສອບຄວາມສຳພັນຂອງປັດໄຈດ້ານການຜະລິດ ແລະ ເທັກໂນໂລຊີ ທີ່ມີຕໍ່ການຕັດສິນໃຈເລືອກປຸກອ້ອຍຂອງປະຊາຊົນ ພົບວ່າ: ຄວາມສະດວກໃນການຈັດຫາແນວພັນອ້ອຍ ມີຄວາມສຳພັນກັບການຕັດສິນໃຈປຸກອ້ອຍ ດ້ວຍຄ່າສະຖິຕິຄວາມສຳພັນ ເທົ່າກັບ 15.33 ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.01 ນັ້ນໝາຍຄວາມວ່າ ຄວາມສະດວກໃນການຈັດຫາແນວພັນອ້ອຍ ມີຄວາມສຳພັນກັບການຕັດສິນໃຈປຸກອ້ອຍທີ່ແຕກຕ່າງກັນ ດ້ວຍລະດັບຄວາມເຊື່ອໝັ້ນ 99%, ເຄື່ອງຈັກໃນການປຸກ ແລະ ເກັບກູ້ອ້ອຍມີຄວາມທັນສະໄໝ ມີຄວາມສຳພັນກັບການຕັດສິນໃຈປຸກອ້ອຍ ດ້ວຍຄ່າສະຖິຕິຄວາມສຳພັນ ເທົ່າກັບ 35.79 ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.01 ນັ້ນໝາຍຄວາມວ່າ ເຄື່ອງຈັກໃນການປຸກ ແລະ ເກັບກູ້ອ້ອຍມີຄວາມທັນສະໄໝ ມີຄວາມສຳພັນກັບການຕັດສິນໃຈປຸກອ້ອຍທີ່ແຕກຕ່າງກັນ ດ້ວຍລະດັບຄວາມເຊື່ອໝັ້ນ 99%, ການມີພະນັກງານວິຊາການລົງມາໃຫ້ຄຳແນະນຳເປັນປະຈຳ ມີຄວາມສຳພັນກັບການຕັດສິນໃຈປຸກອ້ອຍ ດ້ວຍຄ່າສະຖິຕິຄວາມສຳພັນ ເທົ່າກັບ 21.05 ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.01 ນັ້ນໝາຍຄວາມວ່າ ການມີພະນັກງານວິຊາການລົງມາໃຫ້ຄຳແນະນຳເປັນປະຈຳ ມີຄວາມສຳພັນກັບການຕັດສິນໃຈປຸກອ້ອຍທີ່ແຕກຕ່າງກັນ ດ້ວຍລະດັບຄວາມເຊື່ອໝັ້ນ 99% ແລະ ການເຂົ້າເຖິງຂໍ້ມູນກ່ຽວກັບການປຸກ ແລະ ຈຳໜ່າຍອ້ອຍ ມີຄວາມສຳພັນກັບການຕັດສິນໃຈປຸກອ້ອຍ ດ້ວຍຄ່າສະຖິຕິຄວາມສຳພັນ ເທົ່າກັບ 32.10 ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.01 ນັ້ນໝາຍຄວາມວ່າ ການເຂົ້າເຖິງຂໍ້ມູນກ່ຽວກັບການປຸກ ແລະ ຈຳໜ່າຍອ້ອຍ ມີຄວາມສຳພັນກັບການຕັດສິນໃຈປຸກອ້ອຍທີ່ແຕກຕ່າງກັນ ດ້ວຍລະດັບຄວາມເຊື່ອໝັ້ນ 99%; ສຳລັບ ການສະໜັບສະໜຸນດ້ານເທັກໂນໂລຊີຈາກໂຮງງານ ຄວາມສຳພັນກັບການຕັດສິນໃຈປຸກອ້ອຍ ດ້ວຍຄ່າສະຖິຕິຄວາມສຳພັນ ເທົ່າກັບ 5.57 ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.01 ນັ້ນໝາຍຄວາມວ່າ ການສະໜັບສະໜຸນດ້ານເທັກໂນໂລຊີຈາກໂຮງງານ ມີຄວາມສຳພັນກັບການຕັດສິນໃຈປຸກອ້ອຍທີ່ແຕກຕ່າງກັນ ດ້ວຍລະດັບຄວາມເຊື່ອໝັ້ນ 95%.

4. ວິພາກຜົນ

ປະຊາຊົນຜູ້ປຸກອ້ອຍໂດຍສ່ວນໃຫຍ່ເປັນເພດຊາຍ ສ່ວນຫຼາຍມີອາຍຸຢູ່ລະຫວ່າງ 40 – 49 ປີ, ລະດັບການສຶກສາຈົບມັດທະຍົມ, ຈຳນວນສະມາຊິກໃນຄອບຄົວ ສ່ວນຫຼາຍແມ່ນ 4-5 ຄົນ, ຈຳນວນສະມາຊິກໃນຄອບຄົວທີ່ສາມາດປະກອບອາຊີບ ແມ່ນ 2-3 ຄົນ, ໄລຍະເວລາໃນການປຸກອ້ອຍຂອງປະຊາຊົນ ໂດຍສ່ວນຫຼາຍແມ່ນ 5 - 6 ປີ, ການຮັບຮູ້ຂໍ້ມູນກ່ຽວກັບປຸກອ້ອຍ ໂດຍຫຼັກໆມາຈາກຫ້ອງການກະສິກຳເມືອງ ແລະ ຈາກໂຄງການສົ່ງເສີມການປຸກອ້ອຍ. ເນື້ອທີ່ດິນໃນການ

ຜະລິດກະສິກຳ ໂດຍສະເລ່ຍ 1.61 ເຮັກຕາ/ຄອບຄົວ; ເຊິ່ງເນື້ອທີ່ດິນໃນການສະເພາະການປູກອ້ອຍ ໂດຍສະເລ່ຍ 0.73 ເຮັກຕາ/ຄອບຄົວ. ແນວພັນອ້ອຍທີ່ໃຊ້ປູກສ່ວນຫຼາຍແມ່ນແນວພັນອ້ອຍໂຮງງານ. ເຊິ່ງແນວພັນອ້ອຍໄດ້ມາຈາກໂຄງການ ຫຼື ບໍລິສັດສະໜອງໃຫ້; ເຫດຜົນທີ່ເລືອກປູກອ້ອຍຫຼັກໆແມ່ນເນື່ອງຈາກການປູກອ້ອຍ ມີຕະຫຼາດຮອງຮັບພຽງພໍ ແລະ ໄດ້ລາຄາດີ; ໂດຍແຫຼ່ງເງິນທຶນທີ່ໃຊ້ປູກອ້ອຍຫຼັກໆແມ່ນທຶນສະໜັບສະໜູນຈາກບໍລິສັດ ແລະ ໃຊ້ທຶນຕົນເອງ ເຊິ່ງຕົ້ນທຶນທີ່ໃຊ້ປູກອ້ອຍ (ບໍ່ລວມຄ່າແຮງງານ) ໂດຍສະເລ່ຍ 4,506,550 ກີບ/ຄອບຄົວ; ແຮງງານທີ່ໃຊ້ເຂົ້າໃນການປູກອ້ອຍທັງໝົດ ສ່ວນໃຫຍ່ຈະຢູ່ລະຫວ່າງ 6 – 10 ຄົນ ເຊິ່ງໃນນັ້ນແຮງງານທີ່ຈ້າງເພີ່ມສ່ວນໃຫຍ່ແມ່ນຈ້າງເພີ່ມຢູ່ລະຫວ່າງ 1 – 5 ຄົນ ເຊິ່ງມີຄວາມໃກ້ຄຽງກັບຜົນການສຶກສາຂອງ Laosomboon (2018) ທີ່ພົບວ່າ: ຊາວກະສິກອນຜູ້ປູກອ້ອຍໂຮງງານ 57.18% ເປັນເພດຊາຍ, ມີອາຍຸລະຫວ່າງ 40-49 ປີ, ມີຈຳນວນສະມາຊິກໃນຄົວເຮືອນ 3-4 ຄົນ, ມີປະສົບການປູກອ້ອຍສະເລ່ຍ 12 ປີ, ມີແຮງງານໃນການຜະລິດໃນຄົວເຮືອນສະເລ່ຍ 2 ຄົນ, ມີແຮງງານຈ້າງໃນການຜະລິດອ້ອຍ 6 ຄົນ, ມີພື້ນທີ່ໃນການປູກອ້ອຍສະເລ່ຍ 5 ເຮັກຕາ, ມີລາຍໄດ້ຈາກການຂາຍຜົນຜະລິດອ້ອຍສະເລ່ຍ 29,800,000 ກີບ/ເຮັກຕາ ແລະ ເຊິ່ງສອດຄ່ອງກັບຜົນການສຶກສາຂອງ Khansila et al. (2014) ທີ່ພົບວ່າ: ຊາວກະສິກອນທີ່ປູກອ້ອຍສ່ວນໃຫຍ່ເປັນເພດຊາຍ, ມີອາຍຸສະເລ່ຍ 51 ປີ, ປະລິມານຜົນຜະລິດອ້ອຍສະເລ່ຍຕໍ່ປີ 54.48 ໂຕນ/ເຮັກຕາ ແລະ ມີລາຍໄດ້ສະເລ່ຍຈາກການປູກອ້ອຍ 70,000,000 ກີບ/ປີ, ເຫດຜົນທີ່ເລືອກປູກອ້ອຍ ແມ່ນເນື່ອງຈາກຜົນຜະລິດສະເລ່ຍຈາກການປູກອ້ອຍສູງກວ່າການປູກຜືດອື່ນໆ, ປູກ ແລະ ບົວລະບັດຮັກສາງ່າຍ, ຢູ່ໃກ້ແຫຼ່ງຮັບຊື້, ຈຳໜ່າຍໄດ້ລາຄາດີ, ເປັນອາຊີບທີ່ມີຄວາມຊຳນານ ແລະ ປູກຕາມການແນະນຳຂອງໂຮງງານນ້ຳຕານ, ເພື່ອນບ້ານ ແລະ ຍາດພີ່ນ້ອງ; ສຳລັບປັດໄຈທີ່ສົ່ງຜົນຕໍ່ການເລືອກປູກອ້ອຍ ໄດ້ແກ່: ພື້ນທີ່ໃນການປູກ ແລະ ລາຄາຂອງຜົນຜະລິດອື່ນໆທີ່ປູກກ່ອນໜ້າຫັນມາປູກອ້ອຍມີລາຄາຕ່ຳ ຫຼື ລາຄາລຸດລົງ.

ຜົນການວິເຄາະປັດໄຈທີ່ມີຄວາມສຳພັນຕໍ່ການຕັດສິນໃຈເລືອກປູກອ້ອຍເພື່ອເປັນສິນຄ້າຂອງປະຊາຊົນກຸ່ມບ້ານພຽງໄຊ ເມືອງບຸນເໜືອ ແຂວງຜົ້ງສາລີ ພົບວ່າ: ປັດໄຈສ່ວນບຸກຄົນ ເຊັ່ນ: ເພດ, ອາຍຸ, ລະດັບການສຶກສາຂອງຫົວໜ້າຄອບຄົວ, ຈຳນວນສະມາຊິກໃນຄອບຄົວ ແລະ ຈຳນວນແຮງງານໃນຄອບຄົວຄົວ ແມ່ນມີຄວາມສຳຕໍ່ການຕັດສິນໃຈເລືອກປູກອ້ອຍ ດ້ວຍຄວາມສຳຄັນທາງສະຖິຕິ 0.01 ຫຼື ລະດັບຄວາມເຊື່ອໝັ້ນ 99%; ປັດໄຈດ້ານເສດຖະກິດ ເຊັ່ນ: ລາຄາຮັບຊື້ຜົນຜະລິດອ້ອຍ, ນະໂຍບາຍການຄ້ຳປະກັນລາຄາ ແລະ ຄ່າແຮງງານໃນການປູກ ແລະ ເກັບກ່ຽວຜົນຜະລິດ ແມ່ນມີຄວາມສຳພັນ ຫຼື ສົ່ງຜົນຕໍ່ການຕັດສິນໃຈເລືອກປູກອ້ອຍ ດ້ວຍຄວາມສຳຄັນທາງສະຖິຕິທີ່ລະດັບ 0.01 ຫຼື ລະດັບຄວາມເຊື່ອໝັ້ນ 99%; ເຊິ່ງສອດຄ່ອງກັບຜົນການຄົ້ນຄວ້າຂອງ Gilbert (2015) ທີ່ວ່າການມີຕະຫຼາດຮອງຮັບ ແລະ ການມີນະໂຍບາຍເພື່ອຄ້ຳປະກັນລາຄາ ສຳລັບການຈຳໜ່າຍຜົນຜະລິດ ແມ່ນເປັນປັດໄຈໜຶ່ງທີ່ມີຜົນຫຼາຍຕໍ່ການຕັດສິນໃຈເລືອກປູກຜືດຂອງຊາວກະສິກອນ ແລະ ຍັງສອດຄອງກັບຜົນການສຶກສາຂອງ Pothong & Rengkounkway (2022) ໃນດ້ານການມີຕະຫຼາດຮອງຮັບສຳລັບການຈຳໜ່າຍຜົນຜະລິດຢ່າງພຽງພໍ ໂອກາດໃນການຕັດສິນໃຈປູກຜືດຂອງຊາວກະສິກອນ ແລະ ຍັງສອດຄອງກັບຜົນການສຶກສາຂອງ Pothong & Rengkounkway (2022) ໃນດ້ານການມີຕະຫຼາດຮອງຮັບສຳລັບການຈຳໜ່າຍຜົນຜະລິດຢ່າງພຽງພໍ ໂອກາດໃນການຕັດສິນໃຈປູກຜືດຂອງຊາວກະສິກອນ ແລະ ສຳລັບລາຍໄດ້ຈາກການຂາຍຜົນຜະລິດອ້ອຍ ແລະ ຕົ້ນທຶນການປູກອ້ອຍ ແມ່ນມີຄວາມສຳພັນ ຫຼື ສົ່ງຜົນຕໍ່ການຕັດສິນໃຈເລືອກປູກອ້ອຍ ດ້ວຍຄວາມສຳຄັນທາງສະຖິຕິທີ່ລະດັບ 0.05 ຫຼື ລະດັບຄວາມເຊື່ອໝັ້ນ 95%; ເຊິ່ງສອດຄ່ອງກັບຜົນການສຶກສາຂອງ Thanee (2013) ທີ່ວ່າ: ປັດໄຈດ້ານເສດຖະກິດເປັນປັດໄຈທີ່ມີຜົນຕໍ່ການຕັດສິນໃຈເລືອກປູກອ້ອຍຫຼາຍທີ່ສຸດ ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.05 ຫຼື ລະດັບຄວາມເຊື່ອໝັ້ນ 95%; ປັດໄຈດ້ານການຕະຫຼາດ ແລະ ການສະໜັບສະໜູນ ເຊັ່ນ: ຄວາມສະດວກໃນການຂົນສົ່ງ, ການສະໜັບສະໜູນດ້ານເງິນທຶນຈາກບໍລິສັດ ຫຼື ໂຮງງານ ແລະ ການສົ່ງເສີມຈາກໜ່ວຍງານພາກລັດ ແມ່ນມີຄວາມສຳພັນ ຫຼື ສົ່ງຜົນຕໍ່ການຕັດສິນໃຈເລືອກປູກອ້ອຍ ດ້ວຍຄວາມສຳຄັນທາງສະຖິຕິທີ່ລະດັບ 0.01 ຫຼື ລະດັບຄວາມເຊື່ອໝັ້ນ 99%; ເຊິ່ງສອດຄ່ອງກັບຜົນການສຶກສາຂອງ Ponkhot & Yongvanit (2020) ທີ່ພົບວ່າ ການໄດ້ຮັບການສົ່ງເສີມ ແລະ ສະໜັບສະໜູນຈາກພາກລັດ ແລະ ໄດ້ຮັບການຝຶກອົບຮົມການປູກຜືດຈາກພາກລັດມີຜົນຕໍ່ການຕັດສິນໃຈເລືອກປູກຜືດຂອງຊາວກະສິກອນ; ປັດໄຈດ້ານສັງຄົມ ແລະ ກຸ່ມອ້າງອີງ ເຊັ່ນ: ການສະໜັບສະໜູນຂອງຄົນໃນຄອບຄົວ, ການແນະນຳຈາກເພື່ອນບ້ານ, ການແນະນຳຈາກຜູ້ທີ່ປູກອ້ອຍ, ການມີຄວາມຮູ້ວິຊາສະເພາະ ແລະ ປະສົບການໃນການປູກອ້ອຍ ແມ່ນມີຄວາມສຳພັນ ຫຼື ສົ່ງຜົນຕໍ່ການຕັດສິນໃຈເລືອກປູກອ້ອຍ ຕາມລຳດັບ ດ້ວຍຄວາມສຳຄັນທາງສະຖິຕິທີ່ລະດັບ 0.01 ຫຼື ລະດັບຄວາມເຊື່ອໝັ້ນ 99%; ປັດໄຈດ້ານການຍະພາບ ແລະ ສິ່ງແວດລ້ອມ ເຊັ່ນ: ພື້ນທີ່ ແລະ ດິນມີຄວາມເໝາະສົມ, ການມີລະບົບຊົນລະປະທານທີ່ໝັ້ນຄົງ ແລະ ການມີພູມອາກາດ ຫຼື ອຸນຫະພູມເໝາະສົມ ແມ່ນມີຄວາມສຳພັນ ຫຼື ສົ່ງຜົນຕໍ່ການຕັດສິນໃຈເລືອກປູກອ້ອຍ ດ້ວຍຄວາມສຳຄັນທາງສະຖິຕິທີ່ລະດັບ 0.01 ຫຼື ລະດັບຄວາມເຊື່ອໝັ້ນ 99%; ສຳລັບ ການມີປະລິມານນ້ຳຝົນສະໝ່ຳສະເໝີ ແມ່ນມີຄວາມສຳພັນ ຫຼື ສົ່ງຜົນຕໍ່ການຕັດສິນໃຈເລືອກປູກອ້ອຍ ດ້ວຍຄວາມສຳຄັນທາງສະຖິຕິທີ່ລະດັບ 0.1 ຫຼື ລະດັບຄວາມເຊື່ອໝັ້ນ 90%; ແລະ ປັດໄຈດ້ານການຜະລິດ ແລະ ເທັກໂນໂລຊີ ເຊັ່ນ: ຄວາມສະດວກໃນການຈັດຫາແນວພັນອ້ອຍ, ເຄື່ອງຈັກໃນການປູກ ແລະ ເກັບກ່ຽວອ້ອຍ ມີຄວາມທັນສະໄໝ, ການມີພະນັກງານວິຊາການລົງມາໃຫ້ຄຳແນະນຳເປັນປະຈຳ ແລະ ການເຂົ້າເຖິງຂໍ້ມູນກ່ຽວກັບການປູກ ແລະ ຈຳໜ່າຍອ້ອຍ ແມ່ນມີຄວາມສຳພັນ ຫຼື ສົ່ງຜົນຕໍ່ການຕັດສິນໃຈເລືອກປູກອ້ອຍ

ດ້ວຍຄວາມສຳຄັນທາງສະຖິຕິທີ່ລະດັບ 0.01 ຫຼື ລະດັບຄວາມເຊື່ອໝັ້ນ 99%; ສຳລັບ ການສະໜັບສະໜຸນດ້ານເທັກໂນໂລຊີຈາກໂຮງງານ ແມ່ນມີຄວາມສຳພັນ ຫຼື ສິ່ງຜົນຕໍ່ການຕັດສິນໃຈເລືອກປູກອ້ອຍ ດ້ວຍຄວາມສຳຄັນທາງສະຖິຕິທີ່ລະດັບ 0.05 ຫຼື ລະດັບຄວາມເຊື່ອໝັ້ນ 95% ເຊິ່ງສອດຄ່ອງກັບຜົນການສຶກສາຂອງ Meesungnoen & Taweekul (2019) ເຊິ່ງຜົນການສຶກສາພົບວ່າ: ປັດໄຈທີ່ມີຜົນຕໍ່ການຕັດສິນໃຈເລືອກປູກອ້ອຍມີຫຼາຍປັດໄຈ ຄື: ປັດໄຈດ້ານກາຍຍະພາບ ໄດ້ແກ່: ສະພາບພື້ນທີ່ເໝາະສົມ, ຄວາມອຸດົມສົມບູນຂອງພື້ນທີ່, ການຄົມມະນາຄົມ ແລະ ໄລຍະທາງຈາກສວນອ້ອຍໄປເຖິງແຫຼ່ງຈຳໜ່າຍ; ປັດໄຈດ້ານສັງຄົມ ໄດ້ແກ່: ການສະໜັບສະໜຸນຂອງສະມາຊິກໃນຄົວເຮືອນ, ຊາວກະສິກອນແບບຢ່າງ, ການໄດ້ຮັບຄຳແນະນຳຈາກຊາວກະສິກອນແບບຢ່າງ ແລະ ແຮງງານໃນຄົວເຮືອນ; ປັດໄຈດ້ານດ້ານເສດຖະກິດ ໄດ້ແກ່: ແຫຼ່ງຮັບຊື້ຜົນຜະລິດ, ການມີລາຍໄດ້ເພີ່ມຂຶ້ນ, ການສະໜັບສະໜຸນຈາກພາກລັດ, ການເປັນໜີ້ຂອງຄົວເຮືອນ, ຕົ້ນທຶນການຜະລິດ ແລະ ການມີເຄື່ອງຈັກທາງການກະເສດ; ປັດໄຈດ້ານການໄດ້ຮັບການສົ່ງເສີມ ແລະ ບໍລິການ ໄດ້ແກ່: ການປະຊາສຳພັນຂອງໂຄງການຈາກພະນັກງານ, ການຕິດຕໍ່ ແລະ ໄດ້ຮັບການບໍລິການຈາກໜ່ວຍງານພາກລັດ, ການຕິດຕໍ່ ແລະ ໄດ້ຮັບການບໍລິການຈາກໂຮງງານນ້ຳຕານ, ການຝຶກອົບຮົມ, ການໄດ້ຮັບຄຳແນະນຳຈາກເພື່ອນບ້ານ, ການໄດ້ຮັບຄຳແນະນຳຈາກຍາດພີ່ນ້ອງ ແລະ ການໄດ້ຮັບປັດໄຈສະໜັບສະໜຸນຈາກໂຮງງານ ດ້ວຍຄວາມສຳຄັນທາງສະຖິຕິ 0.05 ຫຼື ລະດັບຄວາມເຊື່ອໝັ້ນ 95%;

5. ສະຫຼຸບ

ຜົນການສຶກສາພົບວ່າ ປະຊາຊົນກຸ່ມບ້ານພຽງໄຊ ເມືອງບຸນເໜືອ ແຂວງຜົ້ງສາລີ ໄດ້ປູກອ້ອຍເພື່ອເປັນສິນຄ້າມາແລ້ວ 5–6 ປີ ໂດຍມີເນື້ອທີ່ປູກສະເລ່ຍ 0.73 ເຮັກຕາຕໍ່ຄອບຄົວ ແລະ ໄດ້ຮັບຂໍ້ມູນ ຄວາມຮູ້ ແລະ ການສະໜັບສະໜຸນຈາກຫ້ອງການກະສິກຳເມືອງ, ໂຄງການສົ່ງເສີມ ແລະ ບໍລິສັດຜູ້ສະໜອງແນວພັນ. ເຫດຜົນສຳຄັນທີ່ເລືອກປູກອ້ອຍແມ່ນ ມີຕະຫຼາດຮອງຮັບ, ລາຄາຈຳໜ່າຍດີ ແລະ ຕົ້ນທຶນການປູກຕ່ຳ. ປະລິມານຜົນຜະລິດສະເລ່ຍແມ່ນ 85.70 ໂຕນຕໍ່ຄອບຄົວຕໍ່ປີ ແລະ ລາຍຮັບສະເລ່ຍ 88,251,000 ກີບຕໍ່ຄອບຄົວຕໍ່ປີ. ນອກຈາກນີ້ ຜົນການທົດສອບ Chi-square ພົບວ່າ ປັດໄຈສ່ວນບຸກຄົນ, ດ້ານການຕະຫຼາດ ແລະ ການສະໜັບສະໜຸນ, ດ້ານສັງຄົມ ແລະ ກຸ່ມອ້າງອີງ, ດ້ານກາຍຍະພາບ ແລະ ສິ່ງແວດລ້ອມ, ລວມທັງດ້ານການຜະລິດ ແລະ ເທັກໂນໂລຊີ ມີຄວາມສຳພັນກັບການຕັດສິນໃຈເລືອກປູກອ້ອຍ ຕາມລະດັບຄວາມສຳຄັນທາງສະຖິຕິທີ່ລະບຸໃນຜົນການສຶກສາ. ເຊິ່ງຈາກຜົນການສຶກສາພົບວ່າ ປັດໄຈຕ່າງໆ ເຊັ່ນ: ລາຄາຮັບຊື້ຜົນຜະລິດອ້ອຍ; ນະໂຍບາຍການຄ້ຳປະກັນລາຄາ ແລະ ຄ່າແຮງງານໃນການປູກ ແລະ ເກັບກ່ຽວຜົນຜະລິດ, ລາຍໄດ້ຈາກການຂາຍຜົນຜະລິດອ້ອຍ ແລະ ຕົ້ນທຶນການປູກອ້ອຍ, ຄວາມສະດວກໃນການຂົນສົ່ງ; ການສະໜັບສະໜຸນດ້ານເງິນທຶນຈາກບໍລິສັດ ຫຼື ໂຮງງານ ແລະ ການສົ່ງເສີມຈາກໜ່ວຍງານພາກລັດ ລ້ວນແຕ່ມີຄວາມສຳພັນກັບການຕັດສິນໃຈປູກອ້ອຍຂອງປະຊາຊົນ; ດັ່ງນັ້ນ ຄວນສົ່ງເສີມການປະສານງານລະຫວ່າງຊາວກະສິກອນ, ບໍລິສັດຮັບຊື້ ແລະ ໜ່ວຍງານທີ່ກ່ຽວຂ້ອງ ເພື່ອໃຫ້ການຮັບຊື້ມີຄວາມຊັດເຈນ ແລະ ສ້າງຄວາມໝັ້ນໃຈດ້ານລາຄາ ແລະ ຕະຫຼາດ. ລວມເຖິງຄວນສົ່ງເສີມໃຫ້ຊາວກະສິກອນບັນທຶກຕົ້ນທຶນ, ຜົນຜະລິດ, ລາຍຮັບ ແລະ ກຳໄລສຸດທິ ເພື່ອໃຊ້ເປັນຂໍ້ມູນໃນການວາງແຜນການຜະລິດ ແລະ ຕັດສິນໃຈລົງທຶນ. ເຖິງແນວໃດກໍ່ຕາມການສຶກສານີ້ ໄດ້ສຶກສາສະເພາະກຸ່ມບ້ານພຽງໄຊເທົ່ານັ້ນ ເຊິ່ງຂໍ້ມູນສະພາບການປູກອ້ອຍ ແລະ ປັດໄຈທີ່ສົ່ງຜົນອາດມີຄວາມແຕກຕ່າງຈາກກຸ່ມບ້ານອື່ນໆ ເຊິ່ງໃນການສຶກສາຄັ້ງຕໍ່ໄປຄວນຂະຫຍາຍການສຶກສາໄປຍັງກຸ່ມບ້ານອື່ນໆໃນເມືອງບຸນເໜືອ ຫຼື ພື້ນທີ່ປູກອ້ອຍທີ່ມີສະພາບແຕກຕ່າງກັນ ເພື່ອປຽບທຽບປັດໄຈທີ່ກ່ຽວຂ້ອງກັບການຕັດສິນໃຈປູກອ້ອຍ. ນອກຈາກນີ້ ຄວນສຶກສາປັດໄຈດ້ານຕົ້ນທຶນ, ກຳໄລ, ຄວາມຜັນຜວນຂອງລາຄາ, ຄວາມສ່ຽງດ້ານສະພາບອາກາດ ແລະ ຄວາມໝັ້ນຄົງຂອງຕະຫຼາດ ໂດຍອາດໃຊ້ວິທີການວິເຄາະທາງສະຖິຕິເພີ່ມເຕີມ ເພື່ອໃຫ້ເຂົ້າໃຈປັດໄຈທີ່ກ່ຽວຂ້ອງໄດ້ລະອຽດຂຶ້ນ.

6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຄົ້ນຄວ້າ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

7. ເອກະສານອ້າງອີງ

Ferguson, C. E., & Maurice, S. C. (1978). *Economic Analysis: Theory and Application* (3rd ed.). R. D. Irwin.

Gilbert, O. A. (2015). *Market participation among Cassava value chain actors in rural BENIN* [Unpublished doctoral dissertation]. University of Ghana.

Khansila, T., Mongkonthum, W., & Phetcharaburanin, P. (2014). *Factors affecting the selection of growing sugarcane in Nam Phong District, Khon Kaen Province* [Unpublished master's dissertation]. Khon Kaen University.

Laosomboon, P. (2018). *Factors Relating to Farmers' Decision Making for Industrial Sugarcane Production in Kao Liao District of Nakhon Sawan*

Province. [Unpublished master's dissertation]. Sukhothai Thammathirat Open University

Industrial and Commerce Office of Bounneua District. (2025). *Summary report on the sugarcane cultivation project for the 2024–2025 fiscal year and action plan for the 2025–2026 fiscal year*.

Meesungnoen, N., & Taweekul, K. (2019). Factors affecting decision making on sugarcane cultivation of farmers in Khaosuankwang district Khonkaen province. *Khonkaen AGR. J. 47*(1), 625-630

Ministry of Industry and Commerce. (2025). *Report on the sugar situation of the Lao PDR for the year 2025*. Ministry of Industry and Commerce, Lao PDR.

Naewprasert, P., & Narongchai, W. (2023). Factors related to risk management of sugarcane farmers' households in Northeastern Thailand. *Suratthani Rajabhat Journal, 10*(2), 239-265

Planning and Investment Department. (2025). *Summary of the sugarcane cultivation project 2024–2025 and planned directions for 2025–2026*. Planning and Investment Department of Phongsaly Province.

Planning and Investment Office. (2025). *Socio-economic development plan 2025-2029 report*. Planning and Investment Office of Bounneua District.

Ponkhot, K., & Yongvanit, S. (2020). Evaluation of agricultural policy to major cassava: A case study of Nakhon Ratchasima. *NRRU Community Research Journal*, *14*(1), 155–166.

Pothong, N., & Rengkounkway, M. (2022). Quality of life of cassava farmers participating in the large land plot agricultural extension system, Pa Aor Sub-district, Lan Sak District, Uthai Thani. *Journal of Research and Development Institute, Rajabhat Maha Sarakham University*, *9*(1), 207–224.

Sayvisith, S. (2024). Factors affecting decision making for cassava as a commercial of the people in Nan District, Luang Prabang Province. *Souphanouvong University Journal Multidisciplinary Research and Development*, *10*(2), 154–166. Retrieved from https://su-journal.com/index.php/su/article/view/541

Shaner, W. W., Philipp, P. F., & Schmehl, W. R. (1982). *Farming systems research and development: Guidelines for developing countries*. Westview Press.

Thanee, S. (2013). Factors influencing farmers' decision making to grow sugarcane in Bang Rachan District, Sing Buri Province. *Pathumthani University Academic Journal*, *5*(1), 149–162. https://so05.tci-thaijo.org/index.php/ptujournal/article/view/204377

Yamane, T. (1973). Statistics: an introductory analysis. New York: Harper & Row

Zhongyun Muangla Import-Export Raw Materials Co., Ltd. (2025). *Summary report of the sugarcane planting project for the 2024-2025 production year and the 2025-2026 plan in Phongsaly Province*. Zhongyun Muangla Import-Export Raw Materials Co., Ltd.